# ແຈ້ງການກ່ຽວກັບການປະຕິບັດທີ່ເປັນສ່ວນໂຕ

ແຈ້ງການນີ້ອະທິບາຍເຖິງຂໍ້ມູນທາງການແພດກ່ຽວກັບທ່ານອາດຈະຖືກນໍາໃຊ້ ແລະ ເຜີຍແຜ່ ແລະ ວິທີທີ່ທ່ານສາມາດເຂົ້າເຖິງຂໍ້ມູນນີ້. ກະລຸນາກວດເບິ່ງຢ່າງລະມັດລະວັງ.

## ຂໍ້ມູນຄວາມເປັນສ່ວນໂຕຂອງເຈົ້າໜ້າທີ່


214-456-4444
1935 Medical District Dr.
Dallas, Texas 75235
privacy@childrens.com


## ສິດທິຂອງທ່ານ: ເມື່ອແມ່ນຂໍ້ມູນສຸຂະພາບຂອງທ່ານ, ທ່ານມີສິດຢ່າງແນ່ນອນ.

**ຮັບສໍາເນົາການບັນທຶກປະຫວັດທາງການແພດແບບເອເລັກໂຕຣນິກ ຫຼື ເປັນເອກະສານ.**

- ທ່ານສາມາດຂໍເບິ່ງ ຫຼື ຮັບສໍາເນົາອີເລັກໂທຣນິກ ຫຼື ເປັນເອກະສານປະຫວັດທາງການແພດ ແລະ ຂໍ້ມູນສຸຂະພາບອື່ນໆທີ່ພວກເຮົາມີກ່ຽວກັບທ່ານ. ຖາມພວກເຮົາໄດ້ວ່າເຮັດແບບນີ້ແນວໃດ.
- ພວກເຮົາຈະໃຫ້ສໍາເນົາ ຫຼື ສະຫຼຸບກ່ຽວກັບຂໍ້ມູນສຸຂະພາບຂອງທ່ານ, ຕາມປົກກະຕິພາຍໃນ 15 ວັນນັບແຕ່ການຮ້ອງຂໍຂອງທ່ານ. ພວກເຮົາອາດເກັບຄ່າທໍານຽມທີ່ເຫມາະສົມ, ຄ່າທໍານຽມພື້ນຖານ.

**ຂໍໃຫ້ພວກເຮົາແກ້ໄຂປະຫວັດທາງການແພດຂອງທ່ານ.**

- ທ່ານສາມາດຮ້ອງຂໍໃຫ້ພວກເຮົາແກ້ໄຂຂໍ້ມູນກ່ຽວກັບສຸຂະພາບຂອງທ່ານທີ່ທ່ານຄິດວ່າບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ. ຖາມພວກເຮົາໄດ້ວ່າເຮັດແບບນີ້ແນວໃດ.
- ພວກເຮົາອາດຈະ "ປະຕິເສດ" ກັບຄໍາຮ້ອງຂໍຂອງທ່ານ, ແຕ່ພວກເຮົາຈະບອກທ່ານວ່າເປັນຫຍັງໂດຍການແຈ້ງເປັນລາຍລັກອັກສອນພາຍໃນ 60 ວັນ.

**ຮ້ອງຂໍການສື່ສານທີ່ເປັນຄວາມລັບ.**

- ທ່ານສາມາດຂໍໃຫ້ພວກເຮົາຕິດຕໍ່ທ່ານໄດ້ໃນທາງທີ່ສະເພາະ (ເຊັ່ນ: ໂທລະສັບບ້ານ ຫຼື ຫ້ອງການ) ຫຼື ສົ່ງອີເມວໄປຫາທີ່ຢູ່ອື່ນ.
- ພວກເຮົາຈະເວົ້າວ່າ "ຕົກລົງ" ກັບການຮ້ອງຂໍທີ່ສົມເຫດສົມຜົນທັງຫມົດ.

**ຂໍໃຫ້ພວກເຮົາຈໍາກັດສິ່ງທີ່ພວກເຮົາໃຊ້ ຫຼື ແບ່ງປັນ.**

- ທ່ານສາມາດຮ້ອງຂໍໃຫ້ພວກເຮົາບໍ່ນໍາໃຊ້ ຫຼື ແບ່ງປັນຂໍ້ມູນດ້ານສຸຂະພາບໃນການປິ່ນປົວ, ການຈ່າຍເງິນ, ຫຼື ການປະຕິບັດງານຂອງພວກເຮົາ. ພວກເຮົາບໍ່ຈໍາເປັນຕ້ອງຍອມຮັບການຮ້ອງຂໍຂອງທ່ານ ແລະ ພວກເຮົາອາດຈະ "ປະຕິເສດ" ຖ້າມັນຈະສົ່ງຜົນກະທົບຕໍ່ການດູແລຂອງທ່ານ.

- ຖ້າທ່ານຈ່າຍຄ່າບໍລິການ ຫຼື ລາຍການດູແລສຸຂະພາບທັງໝົດ, ທ່ານສາມາດຂໍໃຫ້ພວກເຮົາບໍ່ແບ່ງປັນຂໍ້ມູນດັ່ງກ່າວເພື່ອຈຸດປະສົງຂອງການຈ່າຍເງິນ ຫຼື ການດຳເນີນງານຂອງພວກເຮົາກັບປະກັນໄພສຸຂະພາບຂອງທ່ານ. ພວກເຮົາຈະເວົ້າວ່າ "ຕົກລົງ" ເວັ້ນເສຍແຕ່ກົດໝາຍຮຽກຮ້ອງໃຫ້ພວກເຮົາແບ່ງປັນຂໍ້ມູນນັ້ນ.

**ຈະໄດ້ຮັບບັນຊີລາຍຊື່ຂອງຜູ້ທີ່ພວກເຮົາໄດ້ແບ່ງປັນຂໍ້ມູນໃຫ້.**

- ທ່ານສາມາດຮ້ອງຂໍລາຍຊື່ (ບັນຊີ) ຂອງເວລາທີ່ພວກເຮົາໄດ້ແບ່ງປັນຂໍ້ມູນດ້ານສຸຂະພາບຂອງ ງທ່ານໃນຫົກປີກ່ອນວັນທີ່ທ່ານຮ້ອງຂໍ, ຜູ້ທີ່ພວກເຮົາແບ່ງປັນນຳ ແລະ ເປັນຫຍັງ.
- ພວກເຮົາຈະລວມການເປີດເຜີຍຂໍ້ມູນທັງໝົດຍົກເວັ້ນສຳຫລັບຂໍ້ມູນການປິ່ນປົວ, ການຈ່າຍເງິນ ແລະ ການດູແລສຸຂະພາບ ແລະ ການເປີດເຜີຍອື່ນໆບາງຢ່າງ (ເຊັ່ນວ່າທ່ານຂໍໃຫ້ພວກເຮົາເຮັດ). ພວກເຮົາຈະສະໜອງບັນຊີໜຶ່ງຕໍ່ປີໂດຍບໍ່ເສຍຄ່າ ແຕ່ຈະຄິດໄລ່ຄ່າທຳນຽມທີ່ເໝາະສົມ, ແຕ່ຈະມີຄ່າໃຊ້ຈ່າຍພື້ນຖານ ຖ້າທ່ານຮ້ອງຂໍໃຫ້ມີອີກບັນຊີພາຍໃນ 12 ເດືອນ.

**ຮັບສຳເນົາຂອງແຈ້ງການຄວາມເປັນສ່ວນຕົວນີ້.**

- ທ່ານສາມາດຂໍເອົາສຳເນົາໜັງສືແຈ້ງການນີ້ໃນເວລາໃດກໍ່ຕາມ, ເຖິງແມ່ນວ່າທ່ານໄດ້ຕົກລົງທີ່ຈະໄດ້ຮັບແຈ້ງການທາງອີເລັກໂທຣນິກ. ພວກເຮົາຈະສະໜອງສຳເນົາເປັນເອກະສານໃຫ້ທ່ານທັນທີ.

**ເລືອກຄົນໃດຄົນໜຶ່ງທີ່ຈະດຳເນີນການໃຫ້ທ່ານ.**

- ຖ້າທ່ານໄດ້ໃຫ້ອຳນາດດ້ານການປິ່ນປົວແກ່ຜູ້ໃດຜູ້ໜຶ່ງ ຫຼື ວ່າຜູ້ໃດຜູ້ໜຶ່ງເປັນຜູ້ປົກຄອງທາງດ້ານກົດໝາຍຂອງທ່ານ, ຜູ້ນັ້ນສາມາດໃຊ້ສິດຂອງທ່ານ ແລະ ເລືອກເອົາຂໍ້ມູນກ່ຽວກັບສຸຂະພາບຂອງທ່ານ.
- ພວກເຮົາຈະເຮັດໃຫ້ແນ່ໃຈວ່າບຸກຄົນນີ້ມີອຳນາດ ແລະ ສາມາດດຳເນີນການແທນທ່ານໄດ້ກ່ອນທີ່ພວກເຮົາຈະດຳເນີນການໃດໆ.

## ທາງເລືອກຂອງທ່ານ: ສຳລັບຂໍ້ມູນກ່ຽວກັບສຸຂະພາບບາງຢ່າງ, ທ່ານສາມາດບອກທາງເລືອກຂອງທ່ານໃຫ້ແກ່ພວກເຮົາກ່ຽວກັບຂໍ້ມູນທີ່ພວກເຮົາຈະແບ່ງປັນ.

**ໃນກໍລະນີດັ່ງກ່າວ,ທ່ານມີສິດ ແລະ ເລືອກທີ່ຈະບອກພວກເຮົາໃຫ້:**

- ແບ່ງປັນຂໍ້ມູນກັບຄອບຄົວ, ຫມູ່ເພື່ອນທີ່ໃກ້ຊິດ, ຫຼື ຜູ້ອື່ນທີ່ກ່ຽວຂ້ອງກັບການດູແລຂອງທ່ານ.
- ແບ່ງປັນຂໍ້ມູນໃນສະຖານະການບັນເທົາທຸກໄພພິບັດ.
- ລວມເອົາຂໍ້ມູນຂອງທ່ານໃນລາຍການຂອງໂຮງໝໍ.

*ຖ້າທ່ານບໍ່ສາມາດບອກຄວາມຕ້ອງການຂອງທ່ານແກ່ພວກເຮົາ, ຕົວຢ່າງ ຖ້າທ່ານບໍ່ຮູ້ສະຕິ, ພວກເຮົາອາດຈະດຳເນີນການຕໍ່ ແລະ ແບ່ງປັນຂໍ້ມູນຂອງທ່ານ ຖ້າພວກເຮົາເຊື່ອວ່າມັນເປັນປະໂຫຍດທີ່ດີທີ່ສຸດຂອງທ່ານ. ພວກເຮົາອາດຈະແບ່ງປັນຂໍ້ມູນຂອງທ່ານໃນເວລາທີ່ຈຳເປັນເພື່ອຫຼຸດຜ່ອນໄພອັນຕະລາຍທີ່ຮ້າຍແຮງຕໍ່ສຸຂະພາບ ຫຼື ຄວາມປອດໄພ.*

**ໃນກໍລະນີເຫຼົ່ານີ້ ພວກເຮົາບໍ່ເຄີຍແບ່ງປັນຂໍ້ມູນຂອງທ່ານ ເວັ້ນເສຍແຕ່ວ່າທ່ານອະນຸຍາດໃຫ້ເຮົາເປັນລາຍລັກອັກສອນ:**

- ຈຸດປະສົງການຕະຫຼາດ.
- ການຂາຍຂໍ້ມູນຂອງທ່ານ.
- ການແບ່ງປັນບັນທຶກການຮັກສາຈິດບໍາບັດເປັນສ່ວນໃຫຍ່.

*ຖ້າທ່ານບໍ່ສາມາດບອກຄວາມຕ້ອງການຂອງທ່ານເຕົ່າພວກເຮົາ, ຕົວຢ່າງ ຖ້າທ່ານບໍ່ຮູ້ສະຕິ, ພວກເຮົາອາດຈະດໍາເນີນການຕໍ່ເລະແບ່ງປັນຂໍ້ມູນຂອງທ່ານ ຖ້າພວກເຮົາເຊື່ອວ່າມັນເປັນປະໂຫຍດທີ່ດີທີ່ສຸດຂອງທ່ານ. ພວກເຮົາອາດຈະແບ່ງປັນຂໍ້ມູນຂອງທ່ານໃນເວລາທີ່ຈໍາເປັນເພື່ອຫຼຸດຜ່ອນໄພອັນຕະລາຍທີ່ຮ້າຍແຮງຕໍ່ສຸຂະພາບ ຫຼື ຄວາມປອດໄພ.*

**ໃນກໍລະນີຂອງການຫາທຶນ:**

- ພວກເຮົາອາດຈະຕິດຕໍ່ທ່ານໃນການພະຍາຍາມທີ່ຈະຫາທຶນ, ແຕ່ທ່ານສາມາດບອກພວກເຮົາບໍ່ໃຫ້ຕິດຕໍ່ທ່ານອີກ.

## ວິທີການນໍາໃຊ້ ແລະ ເຜີຍແຜ່ຂໍ້ມູນຂອງພວກເຮົາ: ຕາມປົກກະຕິພວກເຮົາໃຊ້ ຫຼື ແບ່ງປັນຂໍ້ມູນສຸຂະພາບຂອງທ່ານໂດຍວິທີການຕ່າງໆດັ່ງຕໍ່ໄປນີ້.

**ການປິ່ນປົວທ່ານ:**

- ພວກເຮົາສາມາດນໍາໃຊ້ຂໍ້ມູນສຸຂະພາບຂອງທ່ານ ແລະ ແບ່ງປັນມັນກັບຜູ້ຊ່ຽວຊານດ້ານອື່ນໆທີ່ກໍາລັງປິ່ນປົວທ່ານ.
  **ຕົວຢ່າງ: ທ່ານໝໍທີ່ປິ່ນປົວອາການບາດເຈັບຂອງທ່ານຖາມທ່ານໝໍອີກຄົນໜຶ່ງກ່ຽວກັບສຸຂະພາບໂດຍລວມຂອງທ່ານ.**

**ການດໍາເນີນງານຂອງອົງກອນພວກເຮົາ:**

- ພວກເຮົາສາມາດນໍາໃຊ້ ແລະ ແບ່ງປັນຂໍ້ມູນດ້ານສຸຂະພາບຂອງທ່ານເພື່ອດໍາເນີນການຝຶກ, ປັບປຸງການດູແລຂອງທ່ານ ແລະ ຕິດຕໍ່ຫາທ່ານໃນເວລາທີ່ຈໍາເປັນ.
  **ຕົວຢ່າງ: ພວກເຮົານໍາໃຊ້ຂໍ້ມູນສຸຂະພາບກ່ຽວກັບທ່ານ ເພື່ອຈັດການການປິ່ນປົວ ແລະ ການບໍລິການຂອງທ່ານ.**

**ໃບບິນສໍາຫລັບການບໍລິການຂອງທ່ານ:**

- ພວກເຮົາສາມາດນໍາໃຊ້ ແລະ ແບ່ງປັນຂໍ້ມູນດ້ານສຸຂະພາບຂອງທ່ານໃຫ້ຝ່າຍບັນຊີ ແລະ ເພື່ອໃຫ້ໄດ້ຮັບການຈ່າຍເງິນຈາກແຜນສຸຂະພາບ ຫຼື ບັນດາອົງການອື່ນໆ.
  **ຕົວຢ່າງ: ພວກເຮົາໃຫ້ຂໍ້ມູນກ່ຽວກັບທ່ານແກ່ແຜນປະກັນສຸຂະພາບຂອງທ່ານ ເພື່ອໃຫ້ເຂົາເຈົ້າຈ່າຍຄ່າບໍລິການຂອງທ່ານ**

**ຊ່ວຍເຫຼືອດ້ານສຸຂະພາບ ແລະ ບັນຫາດ້ານຄວາມປອດໄພ:**

- ພວກເຮົາສາມາດແບ່ງປັນຂໍ້ມູນສຸຂະພາບຂອງທ່ານໃນສະຖານະການສະເພາະໃດໜຶ່ງເຊັ່ນ:
  - ການປ້ອງກັນພະຍາດ.
  - ການຊ່ວຍເຫຼືອໃນການເອີ້ນເກັບຄືນຜະລິດຕະພັນ.

    - ລາຍງານຜົນກະທົບທາງລົບຕໍ່ຢາປິ່ນປົວ.
    - ລາຍງານກ່ຽວກັບການລ່ວງລະເມີດ, ການລະເລີຍ ຫຼື ຄວາມຮຸນແຮງໃນຄອບຄົວ.
    - ການປ້ອງກັນ ຫຼື ຫຼຸດຜ່ອນໄພອັນຕະລາຍຮ້າຍແຮງຕໍ່ສຸຂະພາບ ຫຼື ຄວາມປອດໄພຂອງຄົນອື່ນ.

[ຢ້ຽມຢາມເວັບໄຊທ໌ຂອງພະແນກສຸຂະພາບ ແລະ ການບໍລິການດ້ານມະນຸດ ປະເທດສະຫະລັດອາເມລິກາ ສໍາລັບຂໍ້ມູນເພີ່ມເຕີມ.]

**ການດໍາເນີນງານຂອງອົງກອນພວກເຮົາ:**

- ພວກເຮົາສາມາດນໍາໃຊ້ ແລະ ແບ່ງປັນຂໍ້ມູນດ້ານສຸຂະພາບຂອງທ່ານເພື່ອດໍາເນີນການຝຶກ, ປັບປຸງການດູແລຂອງທ່ານ ແລະ ຕິດຕໍ່ຫາທ່ານໃນເວລາທີ່ຈໍາເປັນ.

**ເຮັດການຄົ້ນຄວ້າ:**

- ພວກເຮົາສາມາດນໍາໃຊ້ ຫຼື ແບ່ງປັນຂໍ້ມູນຂອງທ່ານສໍາລັບການຄົ້ນຄວ້າດ້ານສຸຂະພາບ.

**ປະຕິບັດຕາມກົດຫມາຍ:**

- ພວກເຮົາຈະແບ່ງປັນຂໍ້ມູນກ່ຽວກັບທ່ານ ຖ້າຫາກກົດຫມາຍຂອງລັດ ຫຼື ລັດຖະບານກາງຕ້ອງການມັນ, ລວມທັງພະແນກສຸຂະພາບ ແລະ ການບໍລິການມະນຸດ ຖ້າພວກເຂົາຕ້ອງການເຫັນວ່າພວກເຮົາກໍາລັງປະຕິບັດຕາມກົດຫມາຍຄວາມເປັນສ່ວນຕົວຂອງລັດຖະບານຫຼືບໍ່.

**ສະຫນອງກັບຄໍາຮ້ອງຂໍໃນການບໍລິຈາກອະໄວຍະວະ ແລະ ເນື້ອເຍື່ອ:**

- ພວກເຮົາສາມາດແບ່ງປັນຂໍ້ມູນດ້ານສຸຂະພາບທີ່ກ່ຽວກັບທ່ານຕໍ່ອົງການທີ່ຈັດຊື້ອະໄວຍະວະ.

**ເຮັດວຽກກັບຜູ້ກວດສອບທາງການແພດ ຫຼື ຜູ້ຈັດງານສົບ:**

- ພວກເຮົາສາມາດແບ່ງປັນຂໍ້ມູນດ້ານສຸຂະພາບກັບເຈົ້າໜ້າທີ່ພິສູດສົບ, ຜູ້ກວດສອບທາງການແພດ ຫຼື ຜູ້ຈັດງານສົບໃນເວລາທີ່ມີຄົນຕາຍ.

**ການຈ່າຍຄ່າຊົດເຊີຍຂອງພະນັກງານ, ການບັງຄັບໃຊ້ກົດຫມາຍ ແລະ ການຮ້ອງຂໍຂອງລັດຖະບານອື່ນໆ:**

- ພວກເຮົາສາມາດນໍາໃຊ້ ຫຼື ແບ່ງປັນຂໍ້ມູນດ້ານສຸຂະພາບກ່ຽວກັບທ່ານ:
    - ສໍາລັບການຮ້ອງຂໍເງິນຄ່າແຮງງານ.
    - ສໍາລັບຈຸດປະສົງການບັງຄັບໃຊ້ກົດຫມາຍ ຫຼື ເຈົ້າໜ້າທີ່ບັງຄັບໃຊ້ກົດຫມາຍ.
    - ກັບຫນ່ວຍງານກໍາກັບດູແລສຸຂະພາບສໍາລັບກິດຈະກໍາທີ່ຖືກອະນຸຍາດໂດຍກົດຫມາຍ.
    - ສໍາລັບຫນ້າທີ່ລັດຖະບານພິເສດເຊັ່ນ: ການທະຫານ, ຄວາມປອດໄພແຫ່ງຊາດ ແລະ ການປ້ອງກັນປະທານາທິບໍດີ.

**ຕອບສະຫນອງການຟ້ອງຮ້ອງ ແລະ ດໍາເນີນການທາງກົດຫມາຍ:**

- ພວກເຮົາສາມາດແບ່ງປັນຂໍ້ມູນສຸຂະພາບຂອງທ່ານໃນການຕອບຄໍາຖາມຂອງສານ ຫຼື ຄໍາສັ່ງຈາກອໍານາດການປົກຄອງ ຫຼື ຕາມໝາຍສານ.

**ຊ່ວຍຝຶກອົບຮົມພະນັກງານດູແລສຸຂະພາບ:**

- ພວກເຮົາສາມາດນຳໃຊ້ ແລະ ແບ່ງປັນຂໍ້ມູນດ້ານສຸຂະພາບຂອງທ່ານເພື່ອຊ່ວຍໃຫ້ພວກເຮົາຝຶກອົບຮົມຜູ້ຊ່ຽວຊານດ້ານການດູແລສຸຂະພາບຊັ່ນແພດ ແລະ ນັກສຶກສາພະຍາບານ, ຊາວບ້ານ ແລະ ຄົນອື່ນໆ.

**ສຳລັບຂໍ້ມູນເພີ່ມເຕີມຢ້ຽມຢາມເວັບໄຊທ໌ຂອງພະແນກສຸຂະພາບ ແລະ ການບໍລິການດ້ານມະນຸດ ສະຫະລັດອາເມລິກາ**.

## ຫນ້າທີ່ຂອງພວກເຮົາ

- ພວກເຮົາຕ້ອງການກົດຫມາຍເພື່ອຮັກສາຄວາມເປັນສ່ວນຕົວ ແລະ ຄວາມປອດໄພຂອງຂໍ້ມູນດ້ານສຸຂະພາບຂອງທ່ານ.
- ພວກເຮົາຈະແຈ້ງໃຫ້ທ່ານຮູ້ທັນທີຖ້າວ່າມີການລະເມີດເກີດຂື້ນທີ່ອາດຈະມີຄວາມສ່ຽງຕໍ່ຄວາມເປັນສ່ວນຕົວ ຫຼື ຄວາມປອດໄພຕໍ່ຂໍ້ມູນຂອງທ່ານ.
- ພວກເຮົາຕ້ອງປະຕິບັດຕາມຫນ້າທີ່ ແລະ ຄວາມເປັນສ່ວນຕົວທີ່ໄດ້ອະທິບາຍໄວ້ໃນຫນັງສືແຈ້ງການນີ້ ແລະ ໃຫ້ສຳເນົາແກ່ທ່ານ.
- ພວກເຮົາຈະບໍ່ນຳໃຊ້ ຫຼື ແບ່ງປັນຂໍ້ມູນຂອງທ່ານນອກເຫນືອຈາກການອະທິບາຍຢູ່ບ່ອນນີ້ຈົນກວ່າທ່ານບອກພວກເຮົາວ່າສາມາດເຮັດໄດ້ໂດຍເປັນລາຍລັກອັກສອນ. ຖ້າທ່ານບອກພວກເຮົາວ່າພວກເຮົາສາມາດເຮັດໄດ້, ທ່ານອາດຈະປ່ຽນໃຈໃນເວລາໃດກໍ່ໄດ້. ບອກໃຫ້ພວກເຮົາຮູ້ເປັນລາຍລັກອັກສອນຖ້າທ່ານປ່ຽນໃຈ.

ຄຳແນະນຳກ່ຽວກັບການປະຕິບັດຄວາມເປັນສ່ວນຕົວນີ້ອະທິບາຍວ່າ Children's Health, ພະນັກງານ, ພະນັກງານແພດຫມໍ/ຫມໍແຂ້ວ, ອາສາສະຫມັກ, ນັກຮຽນ ແລະ ເດັກຝຶກງານ ແລະ ສະຖານບໍລິການທັງຫມົດ, ຫ້ອງການ ແລະ ຄລີນິກສາມາດໃຊ້ ແລະ ໃຫ້ຂໍ້ມູນສຸຂະພາບທີ່ໄດ້ຮັບການຄຸ້ມຄອງຂອງທ່ານ (PHI) ແກ່ຜູ້ອື່ນ ແລະ ອະທິບາຍສິດຂອງທ່ານໃນການເຂົ້າເຖິງ ແລະ ຄວບຄຸມ PHI ຂອງທ່ານ.

Children's Health ແມ່ນການເກັບກຳຂອງອົງການເບິ່ງແຍງສຸຂະພາບ, ລວມທັງອົງການຄຸ້ມຄອງທີ່ກ່ຽວຂ້ອງ. Children's Health ສອດຄ່ອງກັບກົດລະບຽບຂອງລັດຖະບານກາງ ແລະ ກົດໝາຍລັດ ແລະ ບໍ່ຈຳແນກເຊື້ອຊາດ, ສີຜິວ, ເພດ, ອາຍຸ, ສາສະຫນາ, ຕົ້ນກຳເນີດ ຫຼື ຄວາມພິການ.

ເປັນອົງການຈັດລະບົບການດູແລສຸຂະພາບທີ່ຖືກຈັດຕັ້ງ (OHCA) ເພື່ອອະນຸຍາດໃຫ້ອົງການຄຸ້ມຄອງທີ່ກ່ຽວຂ້ອງຕ່າງໆແບ່ງປັນຂໍ້ມູນທາງດ້ານສຸຂະພາບສ່ວນບຸກຄົນ (PHI) ໃນບັນດາອົງການຄຸ້ມຄອງກິດຈະກຳເຊັ່ນ: ການດູແລຮັກສາສຸຂະພາບແບບບູລະນາການ, ການທົບທວນຄືນການນຳໃຊ້, ການປະເມີນຄຸນະພາບ ແລະ ການປັບປຸງ ຫຼື ໃນດ້ານການຈ່າຍຕ່າງໆ. ຖ້າຜູ້ເຂົ້າຮ່ວມອົງການຈັດລະບົບການດູແລສຸຂະພາບແບ່ງປັນຄວາມສ່ຽງທາງດ້ານການເງິນໃຫການດູແລສຸຂະພາບ.

### ການປ່ຽນແປງເງື່ອນໄຂຂອງແຈ້ງການນີ້

ພວກເຮົາສາມາດປ່ຽນເງື່ອນໄຂຂໍ້ກຳນົດນີ້ ແລະ ການປ່ຽນແປງຈະຖືກນຳໃຊ້ກັບຂໍ້ມູນທັງຫມົດທີ່ພວກເຮົາມີກ່ຽວກັບທ່ານ. ແຈ້ງການໃຫມ່ຈະມີຢູ່ຕາມຄຳຮ້ອງຂໍ, ຢູ່ສະຖານທີ່ໃຫ້ບໍລິການຂອງພວກເຮົາ, ແລະ ຢູ່ໃນເວັບໄຊທ໌ຂອງພວກເຮົາ.

### ຍື່ນຄຳຮ້ອງທຸກຖ້າທ່ານຮູ້ສຶກວ່າສິດທິຂອງທ່ານຖືກລະເມີດ:

- ທ່ານສາມາດຮ້ອງທຸກຖ້າວ່າທ່ານຮູ້ສຶກວ່າພວກເຮົາໄດ້ລະເມີດສິດທິຂອງທ່ານ ໂດຍນຳໃຊ້ຂໍ້ມູນຂ້າງລຸ່ມນີ້ ເພື່ອຕິດຕໍ່ກັບພວກເຮົາ

- ທ່ານສາມາດຍື່ນຄຳຮ້ອງທຸກກັບພະແນກສຸຂະພາບຂອງປະເທດອາເມລິກາ ແລະ ຫ້ອງການບໍລິການດ້ານມະນຸດເພື່ອສິດທິຂອງພົນລະເມືອງໂດຍສົ່ງຈົດໝາຍໄປທີ່ 200 Independence Avenue, S.W., Washington, D.C. 20201, calling **1-877-696-6775, ຫຼື ຢ້ຽມຢາມເວັບໄຊທ໌ຂອງພະແນກສຸຂະພາບ ແລະ ການບໍລິການດ້ານມະນຸດ ສະຫະລັດອາເມລິກາ.**
- ພວກເຮົາຈະບໍ່ຕອບໂຕ້ທ່ານສຳລັບການຍື່ນຄຳຮ້ອງທຸກ.

# ການກຽມພ້ອມກັບບັນດາອົງການເພື່ອການປິ່ນປົວສຸຂະພາບອື່ນໆ

## ອົງການທີ່ກ່ຽວຂ້ອງທາງດ້ານການປິ່ນປົວສຸຂະພາບ

- Anesthesiologists for Children
- Children’s Health Clinical Operations
  - d/b/a Children's Medical Center of Dallas
  - d/b/a Children's Medical Center Plano
- Children’s Medical Center Health Plan
- CHSR, LLC
- Complex Care Medical Services Corporation
- Dallas Physician Medical Services for Children
- OCH Holdings (Our Children’s House)
- Pediatric Imaging Associates, LLC.
- Pediatric Partners
- Physicians for Children
- Physicians Quality Alliance of North Texas
- Texas Bluebonnet Insurance Company

# ອົງການເພື່ອການກຽມພ້ອມດ້ານການຮັກສາສຸຂະພາບ

ບັນຊີລາຍຊື່ຂອງອົງການທາງດ້ານການປິ່ນປົວສຸຂະພາບອື່ນໆ ທີ່ລະບົບ Children’s Health ຂອງເທັກຊັດສ ມີການແບ່ງປັນຂໍ້ມູນດ້ານສຸຂະພາບຂອງທ່ານທີ່ໄດ້ຮັບການປົກປ້ອງ ແມ່ນພາກສ່ວນດຽວກັນກັບ ອົງການເພື່ອການກຽມພ້ອມດ້ານການຮັກສາສຸຂະພາບ

- University of Texas Southwestern Medical Center
- Familia Care, Inc. d/b/a MD Medical Group and TopCare Medical Group, Inc..